ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ:...031.../ສພບ.2025
ນະຄອນຫຼວງວຽງຈັນ, ວັນທີ ..18...ມິຖຸນາ..2025

# ຂໍ້ຕົກລົງ
# ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຂອງສະພາບໍລິຫານ
# ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

- ອີງຕາມຂໍ້ຕົກລົງວ່າດ້ວຍສະພາບໍລິຫານຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ສະບັບປັບປຸງ ເລກທີ 14/ຄຄຊ ລົງວັນທີ 11/12/2024.
- ອີງຕາມມະຕິສະພາບໍລິຫານ ທຄຕລ ສະບັບເລກທີ 024/ສພບ.2025 ລົງວັນທີ 18/06/2025.

**ປະທານສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຕົກລົງ:**

**ມາດຕາ 1:** ແຕ່ງຕັ້ງຄະນະກຳມະການຂອງສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ດັ່ງນີ້:

I. **ຄະນະກຳມະການກວດສອບ**

1. ທ່ານ ສອນໄຊ ສີລາເພັດ ປະທານ
2. ທ່ານ ຣສ. ທອງເພັດ ຈັນທະນີວົງ ຮອງປະທານ
3. ທ່ານ ປະສົມເພັດ ຄຳຕັນ ສະມາຊິກ

❖ **ຄະນະສັງເກດການ ແລະ ຊ່ວຍວຽກຂອງຄະນະກຳມະການກວດສອບ**

1. ຮອງ ຜູ້ອຳນວຍການ ຊີ້ນຳວຽກກວດກາ
2. ຫົວໜ້າ ພະແນກ ກວດກາພາຍໃນ
3. ຫົວໜ້າ ພະແນກ ບັນຊີສັງລວມ

II. **ຄະນະກຳມະການຄຸ້ມຄອງຄວາມສ່ຽງ**

1. ທ່ານ ຣສ. ທອງເພັດ ຈັນທະນີວົງ ປະທານ
2. ທ່ານ ປະສົມເພັດ ຄຳຕັນ ຮອງປະທານ
3. ທ່ານ ສອນໄຊ ສີລາເພັດ ສະມາຊິກ

❖ **ຄະນະສັງເກດການ ແລະ ຊ່ວຍວຽກຂອງຄະນະກຳມະການຄຸ້ມຄອງຄວາມສ່ຽງ:**

1. ຮອງ ຜູ້ອຳນວຍການ ຊີ້ນຳວຽກຄຸ້ມຄອງຄວາມສ່ຽງ
2. ຫົວໜ້າພະແນກ ຄຸ້ມຄອງຄວາມສ່ຽງ ແລະ ສະກັດກັ້ນການຟອກເງິນ
3. ຫົວໜ້າພະແນກ ຄຸ້ມຄອງສິນເຊື່ອ
4. ຫົວໜ້າພະແນກ ບໍລິຫານຊັບສິນ ແລະ ແກ້ໄຂໜີ້ສິນ

5. ຫົວໜ້າ ສູນບັດ

6. ຫົວໜ້າ ສູນໄອທີ

III. **ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ**

1. ທ່ານ ປອ. ອາຄົມ ປຣະເສີດ — ປະທານ
2. ທ່ານ ສຸລີວັດ ສຸວັນນະຈູມຄຳ — ຮອງປະທານ
3. ທ່ານ ນາງ ສາຍສະໝອນ ຈັນທະຈັກ — ສະມາຊິກ

❖ **ຄະນະສັງເກດການ ແລະ ຊ່ວຍວຽກຂອງຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ**

1. ຮອງຜູ້ອຳນວຍການ ຊີ້ນຳວຽກຫ້ອງການ
2. ຫົວໜ້າພະແນກ ຈັດຕັ້ງ ແລະ ພະນັກງານ
3. ຫົວໜ້າພະແນກ ຫ້ອງການບໍລິຫານ ແລະ ການເງິນ

IV. **ຄະນະກຳມະການຄຸ້ມຄອງບໍລິຫານ**

1. ທ່ານ ນາງ ລັດດາວັນ ຊິງວິໄລ — ປະທານ
2. ທ່ານ ນາງ ສາຍສະໝອນ ຈັນທະຈັກ — ຮອງປະທານ
3. ທ່ານ ສອນໄຊ ສີລາເພັດ — ສະມາຊິກ

❖ **ຄະນະສັງເກດ ແລະ ຊ່ວຍວຽກຂອງຄະນະກຳມະການຄຸ້ມຄອງບໍລິຫານ**

1. ຮອງ ຜູ້ອຳນວຍການ ຊີ້ນຳວຽກງານຄົ້ນຄວ້າ ພັດທະນາ ແລະ ຄຸ້ມຄອງສາຂາ
2. ຮອງ ຜູ້ອຳນວຍການ ຊີ້ນຳວຽກງານບັນຊີ
3. ຮອງ ຜູ້ອຳນວຍການ ຊີ້ນຳວຽກງານບໍລິຫານທຶນ
4. ຫົວໜ້າພະແນກຄົ້ນຄວ້າ ແລະ ພັດທະນາ;
5. ຫົວໜ້າພະແນກ ບໍລິຫານທຶນ
6. ຫົວໜ້າພະແນກ ຫ້ອງການບໍລິຫານ ແລະ ການເງິນ
7. ຫົວໜ້າພະແນກ ຈັດຕັ້ງ ແລະ ພະນັກງານ
8. ຫົວໜ້າພະແນກຄຸ້ມຄອງສິນເຊື່ອ

**ມາດຕາ 2: ສິດ ແລະ ໜ້າທີ່ຂອງບັນດາຄະນະກຳມະການ**

ຄະນະກຳມະການແຕ່ລະຄະນະ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບສະພາບໍລິຫານ ແລະ ຂໍ້ຕົກລົງສະເພາະຂອງແຕ່ລະຄະນະກຳມະການ ທີ່ມີການປະກາດນຳໃຊ້ແຕ່ລະໄລຍະ.

**ມາດຕາ 3: ສິດ ແລະ ໜ້າທີ່ຂອງຄະນະສັງເກດການ**

ຄະນະສັງເກດການມີສິດ ແລະ ໜ້າທີ່ ໃນການກະກຽມຂໍ້ມູນທີ່ຕິດພັນກັບວຽກງານທີ່ຕົນເອງຮັບຜິດຊອບ ເພື່ອລາຍງານຕໍ່ຄະນະກຳມະການສະພາບໍລິຫານ ເພື່ອຮັບຊາບ ແລະ ພິຈາລະນາຮັບຮອງ, ພ້ອມທັງມີສິດນຳສະເໜີ, ປະກອບຄຳເຫັນ, ອະທິບາຍຊີ້ແຈງຕໍ່ຄະນະກຳມະການເພື່ອພິຈາລະນາຮັບຮອງບັນຫາໃດໜຶ່ງທີ່ກ່ຽວຂ້ອງກັບສິດ ແລະ ໜ້າທີ່ຂອງແຕ່ລະຄະນະກຳມະການ, ແຕ່ຈະບໍ່ມີສິດລົງຄະແນນສຽງເພື່ອຮັບຮອງ ບັນຫາດັ່ງກ່າວ.

**ມາດຕາ 4: ນະໂຍບາຍຕໍ່ຄະນະກຳມະການ**

ສະມາຊິກຄະນະກຳມະການຂອງສະພາບໍລິຫານ ທີ່ບໍ່ໄດ້ປະຈຳການຢູ່ ທຄຕລ ຈະໄດ້ຮັບນະໂຍບາຍການເຂົ້າຮ່ວມກອງ ປະຊຸມແຕ່ລະຄັ້ງດັ່ງນີ້:

- ປະທານຄະນະກຳມະການ 2.500.000 ກີບ/ຄົນ/ຄັ້ງ
- ຮອງປະທານຄະນະກຳມະການ 2.300.000 ກີບ/ຄົນ/ຄັ້ງ
- ສະມາຊິກ 2.000.000 ກີບ/ຄົນ/ຄັ້ງ

ກໍລະນີເປີດປະຊຸມຫຼາຍກວ່າໜຶ່ງຄະນະກຳມະການໃນວັນດຽວກັນ ຫຼື ຈັດປະຊຸມໃນວັນດຽວກັບກອງປະຊຸມຂອງສະພາບໍລິຫານ ຈະໄດ້ຮັບເບ້ຍປະຊຸມພຽງແຕ່ອັນດຽວທີ່ສູງກວ່າ.

**ມາດຕາ 5:** ມອບໃຫ້ສະພາບໍລິຫານ, ຄະນະອຳນວຍການ, ບັນດາພະແນກ, ສູນ, ສາຂາຂອງ ທຄຕລ ໃນທົ່ວລະບົບ, ບັນດາທ່ານທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດຕາມໜ້າທີ່ຂອງໃຜລາວ.

**ມາດຕາ 6:** ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງສະບັບເລກທີ 023/ທຄຕລ.ສພທ, ລົງວັນທີ 17/05/2024 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາບໍລິຫານ**

**ສຸລິອັດ ສຸວັນນະຈູມຄຳ**